**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການຊີ້ນຳລວມອຳນວຍຄວາມສະດວກທາງດ້ານການຄ້າ ເລກທີ 001/ຄອຄສ

ນະຄອນຫຼວງວຽງຈັນ, ວັນທີ 26 ທັນວາ 2018

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງກອງເລຂາຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຊີ້ນຳລວມອຳນວຍຄວາມສະດວກທາງດ້ານການຄ້າ ເລກທີ 48/ນຍ, ລົງວັນທີ 26 ກໍລະກົດ 2018;
- ອີງຕາມຂໍ້ຕົກລົງ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ແຜນດຳເນີນງານວຽກອຳນວຍຄວາມສະດວກທາງດ້ານການຄ້າ ປີ 2017-2022, ເລກທີ 0051/ກຊອຄ ລົງວັນທີ 25 ກັນຍາ 2017.

## ຮອງນາຍົກລັດຖະມົນຕີ,
## ຫົວໜ້າຄະນະກຳມະການຊີ້ນຳລວມອຳນວຍຄວາມສະດວກທາງດ້ານການຄ້າ
## ອອກຂໍ້ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ລະບອບແບບແຜນວິທີການເຮັດວຽກ ເພື່ອເປັນບ່ອນອີງດ້ານນິຕິກຳໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກອງເລຂາຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ໃນການຈັດຕັ້ງປະຕິບັດວຽກງານການອຳນວຍຄວາມສະດວກທາງດ້ານການຄ້າ ແນໃສ່ຫຼຸດຜ່ອນຂັ້ນຕອນ ແລະ ສິ່ງກີດຂວາງທາງດ້ານການຄ້າ ເພື່ອຊຸກຍູ້ ແລະ ສົ່ງເສີມການຄ້າໃຫ້ມີການຂະຫຍາຍຕົວ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ກອງເລຂາຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ໂດຍມີຊື່ຫຍໍ້ວ່າ "ກຄອຄ" ແລະ ຂຽນເປັນພາສາອັງກິດວ່າ Trade Facilitation Committee Secretariat ຂຽນຫຍໍ້ "TFCS'', ແມ່ນການຈັດຕັ້ງທີ່ບໍ່ປະຈຳການ, ມີພາລະບົດບາດເປັນເສນາທິການໃຫ້ແກ່ຄະນະກຳມະການຊີ້ນຳລວມອຳນວຍຄວາມສະດວກທາງດ້ານການຄ້າ.

# ໝວດທີ II

# ໜ້າທີ່ ແລະ ຂອບເຂດສິດ

## ມາດຕາ 3 ໜ້າທີ່

ກອງເລຂາຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ມີໜ້າທີ່ດັ່ງນີ້:

1. ຊ່ວຍ ຄະນະກຳມະການຊີ້ນຳລວມອຳນວຍຄວາມສະດວກທາງດ້ານການຄ້າ ຂັ້ນສູນກາງ (ຄອຄສ) ໃນການສຶກສາຄົ້ນຄວ້າ ແລະ ສະເໜີປະກອບຄຳເຫັນຕໍ່ ບັນດານະໂຍບາຍ, ແຜນຍຸດທະສາດ, ແຜນແມ່ບົດ, ນິຕິກຳ, ສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
2. ເປັນຈຸດປະສານງານກັບບັນດາກະຊວງ, ອົງການທຽບເທົ່າກະຊວງ, ພາກລັດ ແລະ ພາກທຸລະກິດ ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອພິຈາລະນາແກ້ໄຂບັນຫາ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດ;
3. ຄົ້ນຄວ້າ, ປັບປຸງຂັ້ນຕອນ ແລະ ມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (Non-Tariff Measures: NTMs) ທີ່ຕິດພັນກັບການເຄື່ອນຍ້າຍ, ການນຳເຂົ້າ-ສົ່ງອອກ ແລະ ການຂົນສົ່ງສິນຄ້າຜ່ານແດນສາກົນ ລວມທັງ ສິນຄ້າທີ່ສາມາດນຳໃຊ້ໄດ້ສອງດ້ານ, ໃຫ້ສອດຄ່ອງກັບບັນດາສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
4. ຕິດຕາມ, ຊຸກຍູ້ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ບັນດານິຕິກຳ, ສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
5. ຊຸກຍູ້ ແລະ ສົ່ງເສີມການນຳໃຊ້ ລະບົບເຕັກໂນໂລຊີການສື່ສານ ຂໍ້ມູນຂ່າວສານທາງດ້ານການຄ້າ ທີ່ທັນສະໄໝ ເພື່ອເຊື່ອມໂຍງກັບສາກົນ;
6. ຝຶກອົບຮົມ, ຍົກລະດັບ ແລະ ໂຄສະນາເຜີຍແຜ່ ໃຫ້ພາກລັດ ແລະ ພາກທຸລະກິດ ກ່ຽວກັບ ບັນດານິຕິກຳ, ສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
7. ເປັນຈຸດປະສານງານໃນການຊອກຫາແຫຼ່ງທຶນ ແລະ ຊ່ຽວຊານ ເພື່ອພັດທະນາວຽກງານອຳນວຍຄວາມສະດວກທາງດ້ານການຄ້າ;
8. ເປັນຈຸດປະສານງານກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ໃນການເຂົ້າຮ່ວມເຈລະຈາ ບັນດາສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
9. ຂຶ້ນແຜນວຽກ ແລະ ງົບປະມານປະຈຳປີ ເພື່ອນຳໃຊ້ເຂົ້າໃນວຽກງານອຳນວຍຄວາມສະດວກທາງດ້ານການຄ້າ;
10. ຈັດກອງປະຊຸມຮ່ວມ ລະຫວ່າງ ຂັ້ນສູນກາງ ແລະ ຂັ້ນແຂວງ/ນະຄອນຫຼວງ 02 ຄັ້ງຕໍ່ປີ ເພື່ອສະຫຼຸບ, ຖອດຖອນບົດຮຽນ ແລະ ລາຍງານ ຂໍທິດຊີ້ນຳຈາກລັດຖະບານ ໃນການຈັດຕັ້ງປະຕິບັດວຽກງານອຳນວຍຄວາມສະດວກທາງດ້ານການຄ້າ;
11. ແຕ່ງຕັ້ງໜ່ວຍງານຈັດຕັ້ງປະຕິບັດແຜນດຳເນີນງານວຽກງານອຳນວຍຄວາມສະດວກທາງດ້ານການຄ້າ (Trade Facilitation Implementation Unit: TIU) ຢູ່ພາຍໃນກົມກອງຂອງຕົນ ເພື່ອຊ່ວຍວຽກ ແລະ ເປັນຈຸດປະສານ ກັບ ຫ້ອງການປະຈຳກອງເລຂາຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ.
12. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງລັດຖະບານ.

## ມາດຕາ 4 ຂອບເຂດສິດ

ກອງເລຂາຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ມີຂອບເຂດສິດ ດັ່ງນີ້:

1. ຊີ້ນຳ, ຄຸ້ມຄອງ, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ແລະ ຊຸກຍູ້ ໃຫ້ພາກສ່ວນທີ່ກ່ຽວຂ້ອງປະກອບສ່ວນເຂົ້າໃນການປັບປຸງວຽກງານດັ່ງກ່າວ ໃຫ້ນັບມື້ນັບດີຂຶ້ນ;

2. ລາຍງານ ຄອຄສ ເພື່ອນຳສະເໜີ ລັດຖະບານ ພິຈາລະນາສ້າງ ຫຼື ປັບປຸງ ບັນດານິຕິກຳ ທີ່ຕິດພັນກັບວຽກງານອຳນວຍຄວາມສະດວກທາງດ້ານການຄ້າ;
3. ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ ແລະ ທຸລະກິດ ເພື່ອຍົກສູງການຮ່ວມມືໃນການ ຈັດຕັ້ງປະຕິບັດແຜນຍຸດທະສາດ/ແຜນດຳເນີນງານວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ຂອງ ສປປ ລາວ ທີ່ວາງອອກໃນແຕ່ລະໄລຍະ;
4. ຄົ້ນຄວ້າ ແລະ ນຳສະເໜີ ບັນດາກະຊວງ, ຂະແໜງການທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂບັນຫາ ແລະ ສິ່ງກີດຂວາງໃນການອຳນວຍຄວາມສະດວກທາງດ້ານການຄ້າໃຫ້ມີຄວາມເປັນເອກະພາບ, ສະດວກ, ວ່ອງໄວ, ກະທັດຮັດ, ໂປ່ງໃສ ແລະ ສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ, ສົນທິສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
5. ຄົ້ນຄວ້າ, ຖອດຖອນບົດຮຽນ, ເຂົ້າຮ່ວມ ຝຶກອົບຮົມ ແລະ ກອງປະຊຸມຕ່າງໆ ກ່ຽວກັບການຈັດຕັ້ງປະຕິບັດວຽກງານອຳນວຍຄວາມສະດວກທາງດ້ານການຄ້າທັງພາຍໃນ ແລະ ຕ່າງປະເທດ;
6. ໂຄສະນາ, ເຜີຍແຜ່ ບັນດາ ສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
7. ສະໜອງຂໍ້ມູນ, ໃຫ້ຄຳປຶກສາ ແລະ ແລກປ່ຽນປະສົບການ ທີ່ຕິດພັນກັບວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ໃຫ້ແກ່ພາກລັດ ແລະ ທຸລະກິດ;
8. ນຳໃຊ້ງົບປະມານ, ພາຫະນະ ແລະ ອຸປະກອນຮັບໃຊ້ຕ່າງໆ ທີ່ລັດຖະບານ ປະກອບໃຫ້;
9. ນຳໃຊ້ສິດອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ III

## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບການຈັດຕັ້ງ

ກອງເລຂາຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ມີຫ້ອງການປະຈຳຕັ້ງຢູ່ ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ທັງເປັນກົງຈັກຊ່ວຍວຽກ ແລະ ປະກອບມີຜູ້ຕາງໜ້າຈາກຂະແໜງການກ່ຽວຂ້ອງເຂົ້າຮ່ວມ ເປັນຄະນະ.

### ມາດຕາ 6 ໂຄງປະກອບບຸກຄະລາກອນ

ກອງເລຂາຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ມີໂຄງປະກອບ ບຸກຄະລາກອນ ດັ່ງນີ້:

1. ທ່ານ ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຫົວໜ້າ, ຜູ້ຊີ້ນຳລວມ;
2. ທ່ານ ຫົວໜ້າ ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຮອງຫົວໜ້າ, ຜູ້ປະຈຳການ;
3. ທ່ານ ຫົວໜ້າ ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ ເປັນຮອງຫົວໜ້າ;
4. ທ່ານ ຫົວໜ້າ ກົມພາສີ, ກະຊວງການເງິນ ເປັນຮອງຫົວໜ້າ;
5. ທ່ານ ຫົວໜ້າ ກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຮອງຫົວໜ້າ;
6. ທ່ານ ຫົວໜ້າ ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ເປັນຮອງຫົວໜ້າ;
7. ທ່ານ ຫົວໜ້າ ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້ ເປັນຮອງຫົວໜ້າ;
8. ທ່ານ ຫົວໜ້າ ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ເປັນຮອງຫົວໜ້າ;
9. ທ່ານ ຫົວໜ້າ ກົມມາດຕະຖານ ແລະ ວັດແທກ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນຮອງຫົວໜ້າ;
10. ທ່ານ ຮອງຫົວໜ້າ ກົມນະໂຍບາຍການຄ້າຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຄະນະ;
11. ທ່ານ ຮອງຫົວໜ້າ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຄະນະ;

12. ທ່ານ ຮອງຫົວໜ້າ ກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນ ຄະນະ;
13. ທ່ານ ຮອງຫົວໜ້າ ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຄະນະ;
14. ທ່ານ ຮອງຫົວໜ້າ ກົມຄຸ້ມຄອງບໍ່ແຮ່, ກະຊວງພະລັງງານ ແລະ ບໍ່ແຮ່ ເປັນຄະນະ;
15. ທ່ານ ຮອງຫົວໜ້າ ກົມເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ, ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຄະນະ;
16. ທ່ານ ຮອງຫົວໜ້າ ກົມເສດຖະກິດ, ກະຊວງການຕ່າງປະເທດ ເປັນຄະນະ;
17. ທ່ານ ຮອງຫົວໜ້າ ກົມສົນທິສັນຍາ ແລະ ກົດໝາຍ, ກະຊວງການຕ່າງປະເທດ ເປັນຄະນະ;
18. ທ່ານ ຮອງຫົວໜ້າ ກົມຄົ້ນຄວ້າ-ສັງລວມ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນຄະນະ;
19. ທ່ານ ຮອງຫົວໜ້າ ກົມອານາໄມ ແລະ ສົ່ງເສີມສຸຂະພາບ, ກະຊວງສາທາລະນະສຸກ ເປັນຄະນະ;
20. ທ່ານ ຮອງຫົວໜ້າ ກົມເຕັກໂນໂລຊີ ດິຈິຕ໋ອນ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນຄະນະ;
21. ທ່ານ ຮອງຫົວໜ້າ ກົມຊັບສິນທາງປັນຍາ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນຄະນະ
22. ທ່ານ ຮອງຫົວໜ້າ ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ເປັນຄະນະ;
23. ທ່ານ ຮອງຫົວໜ້າ ກົມກວດກາປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ເປັນຄະນະ;
24. ທ່ານ ຮອງຫົວໜ້າ ກົມສ່ວຍສາອາກອນ, ກະຊວງ ການເງິນ ເປັນຄະນະ;
25. ທ່ານ ຮອງຫົວໜ້າ ກົມຄຸ້ມຄອງຊັບສິນຂອງລັດ, ກະຊວງການເງິນ ເປັນຄະນະ;
26. ທ່ານ ຮອງຫົວໜ້າ ກົມການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ, ກະຊວງການເງິນ ເປັນຄະນະ;
27. ທ່ານ ຮອງຫົວໜ້າ ກົມພິມຈຳໜ່າຍ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຄະນະ;
28. ທ່ານ ຮອງຫົວໜ້າ ກົມຄວບຄຸມມົນລະພິດ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນ ຄະນະ;
29. ທ່ານ ຮອງຫົວໜ້າ ກົມຕຳຫຼວດເສດຖະກິດ, ກະຊວງປ້ອງກັນຄວາມສະຫງົບ ເປັນຄະນະ;
30. ທ່ານ ຮອງຫົວໜ້າ ກົມຕຳຫຼວດຈາລະຈອນ, ກະຊວງປ້ອງກັນຄວາມສະຫງົບ ເປັນຄະນະ;
31. ທ່ານ ຮອງຫົວໜ້າ ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ ເປັນຄະນະ;
32. ທ່ານ ເລຂາທິການ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເປັນຄະນະ.

ສຳລັບບຸກຄະລາກອນທີ່ຈະປະກອບເຂົ້າໃນ ກອງເລຂາ ແມ່ນໃຫ້ແຕ່ລະອົງກອນທີ່ກ່ຽວຂ້ອງ ເປັນຜູ້ແຕ່ງຕັ້ງ ຕາມທີ່ໄດ້ລະບຸໃນມາດຕາ 5 ແລະ ມາດຕາ 6 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ IV
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 7 ຫຼັກການ

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ ແລະ ຕົກລົງເປັນໝູ່ຄະນະ ກ່ຽວກັບ ວຽກງານອຳນວຍຄວາມສະດວກທາງດ້ານການຄ້າ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງກອງເລຂາຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ;
3. ທຸກການເຄື່ອນໄຫວຂອງກອງເລຂາຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ແມ່ນອີງໃສ່ແນວ ທາງນະໂຍບາຍຂອງພັກ, ກົດໝາຍ, ລະບຽບການ ແລະ ຫຼັກການລວມ ຂອງລັດຖະບານ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ;
4. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງລັດ, ລວມໝູ່, ປະຊາຊົນ ແລະ ພາກທຸລະກິດ.

**ມາດຕາ 8 ແບບແຜນວິທີເຮັດວຽກ**

1. ເຮັດວຽກແບບມີແຜນງານ, ແຜນການ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ;
2. ເຄື່ອນໄຫວວຽກງານໂດຍຖືເອົາລະບອບປະຊຸມສາມັນທຸກ 03 ເດືອນ ຫຼື ກໍລະນີມີຄວາມຈໍາເປັນສາມາດເປີດກອງປະຊຸມວິສາມັນໄດ້ ເພື່ອຄົ້ນຄວ້າພິຈາລະນາ, ຊຸກຍູ້, ຕິດຕາມ, ຄຸ້ມຄອງ, ສະຫລຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້-ຜົນເສຍ ພ້ອມທັງລາຍງານໃຫ້ ຄອຄສ ຢ່າງເປັນປົກກະຕິ;
3. ປະສານສົມທົບຢ່າງແໜ້ນແຟ້ນກັບຂະແໜງການອື່ນທີ່ກ່ຽວຂ້ອງ ລະຫວ່າງ ຂັ້ນສູນກາງ ແລະ ຂັ້ນແຂວງ ແນໃສ່ປັບປຸງສະພາບແວດລ້ອມທີ່ເອື້ອອໍານວຍຄວາມສະດວກ ຕໍ່ການດໍາເນີນທຸລະກິດໃຫ້ສອດຄ່ອງກັບລະບຽບຫຼັກການ.

**ມາດຕາ 9 ລະບຽບການດໍາເນີນກອງປະຊຸມ**

ກອງເລຂາຄະນະກໍາມະການອໍານວຍຄວາມສະດວກທາງດ້ານການຄ້າ ທີ່ໄດ້ຮັບການແຕ່ງຕັ້ງ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງ ຕ້ອງເຂົ້າຮ່ວມກອງປະຊຸມຕາມການເຊື້ອເຊີນ ເພື່ອນໍາເໜີບັນຫາ ແລະ ປະກອບຄໍາເຫັນ ທີ່ນໍາເຂົ້າພິຈາລະນາໃນກອງປະຊຸມ. ໃນກໍລະນີຈໍາເປັນ ທີ່ບໍ່ສາມາດເຂົ້າຮ່ວມໄດ້ ແມ່ນໃຫ້ມອບໝາຍຜູ້ຕາງໜ້າເຂົ້າຮ່ວມແທນ, ຜູ້ເຂົ້າຮ່ວມກອງປະຊຸມ ມີສິດປະກອບຄໍາເຫັນຕໍ່ທຸກບັນຫາ ທີ່ນໍາເຂົ້າພິຈາລະນາໃນກອງປະຊຸມ ຕິດພັນກັບວຽກງານຂະແໜງການຂອງຕົນ ຫຼື ຂະແໜງການທີ່ກ່ຽວຂ້ອງ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 10 ງົບປະມານການເຄື່ອນໄຫວ**

ກອງເລຂາຄະນະກໍາມະການອໍານວຍຄວາມສະດວກທາງດ້ານການຄ້າ ມີງົບປະມານສະເພາະ ເພື່ອເຄື່ອນໄຫວວຽກງານ ທີ່ຕິດພັນກັບການອໍານວຍຄວາມສະດວກທາງດ້ານການຄ້າ ໂດຍອີງຕາມແຜນຍຸດທະສາດ/ແຜນດໍາເນີນງານວຽກງານອໍານວຍຄວາມສະດວກທາງດ້ານການຄ້າ ໃນແຕ່ລະໄລຍະ.

ງົບປະມານສໍາລັບການເຄື່ອນໄຫວຂອງກອງເລຂາຄະນະກໍາມະການອໍານວຍຄວາມສະດວກທາງດ້ານການຄ້າ ປະກອບມີ:

- ໃນໄລຍະ 2018-2022 ແມ່ນນໍາໃຊ້ງົບປະມານຂອງໂຄງການ Lao PDR Competitiveness and Trade Project ທີ່ທະນາຄານໂລກ ແລະ ຄູ່ຮ່ວມພັດທະນາໃຫ້ການສະໜັບສະໜູນ. ພາຍຫຼັງສິ້ນສຸດໂຄງການ ແມ່ນນໍາໃຊ້ງົບປະມານຂອງລັດຖະບານ ໂດຍໃຫ້ກອງເລຂາຄະນະກໍາມະການດັ່ງກ່າວຂຶ້ນແຜນງົບປະມານບ່ວງບໍລິຫານປົກກະຕິ;
- ງົບປະມານຈາກການຊ່ວຍເຫຼືອຂອງຄູ່ຮ່ວມພັດທະນາ;
- ງົບປະມານຈາກພາກສ່ວນອື່ນໆ.

**ມາດຕາ 11 ການຈັດຕັ້ງປະຕິບັດ**

ກອງເລຂາຄະນະກໍາມະການອໍານວຍຄວາມສະດວກທາງດ້ານການຄ້າ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້, ຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 12 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຮອງນາຍົກລັດຖະມົນຕີ,**

**ຫົວໜ້າຄະນະ**

**ສອນໄຊ ສີພັນດອນ**